# ຄູ່ມືແນະນຳ

## ກ່ຽວກັບການປະກອບເອກະສານຂໍຈົດແຈ້ງ ຜະລິດຕະພັນເຄື່ອງສຳອາງ

*COSMETIC NOTIFICATION MANUAL*

ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ

ຖະໜົນສີເມືອງ, ບ້ານ ທາດຂາວ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ

ໂທລະສັບ 021 214013–14 www.fdd.gov.la

ໂດຍອີງໃສ່ຂໍ້ກຳນົດວ່າດ້ວຍ ການຄຸ້ມຄອງຄຸນນະພາບຜະລິດຕະພັນເຄື່ອງສຳອາງ ສະບັບເລກທີ 2580 /ກຊສ, ລົງວັນທີ 12 ພະຈິກ 2003, ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ ຈຶ່ງສ້າງຄຳແນະນຳສະບັບນີ້ເພື່ອເປັນການອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງທີ່ດຳເນີນທຸລະກິດກ່ຽວກັບ ການຜະລິດ ແລະ ນຳເຂົ້າຜະລິດຕະພັນເຄື່ອງ ສາມາດເຂົ້າໃຈໄດ້ງ່າຍເຖິງການປະກອບເອກະສານເພື່ອຂໍຈົດແຈ້ງ ແລະ ການສະໜອງບັນດາເອກະສານທີ່ຈຳເປັນໃຫ້ແກ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເພື່ອເປັນບ່ອນອີງໃນການພິຈາລະນາອະນຸມັດ ຫຼື ປະຕິເສດການຂໍຈົດແຈ້ງຜະລິດຕະພັນເຄື່ອງສຳອາງ ເຊິ່ງບັນດາຂໍ້ມູນຕ່າງໆໄດ້ຈັດລຽງຕາມສາລະບານດັ່ງລຸ່ມນີ້:

## ສາລະບານ


**1.ເຄື່ອງສຳອາງແມ່ນຫຍັງ? .......................................... 2**

**2.ການຈັດປະເພດເຄື່ອງສຳອາງ .......................................... 2**

**3.ເງື່ອນໄຂຂອງຫົວໜ່ວຍທຸລະກິດທີ່ຕ້ອງການຈົດແຈ້ງ .......................................... 2**

**4.ເອກະສານທີ່ຕ້ອງປະກອບໃນການຂໍຈົດແຈ້ງ .......................................... 2-16**

**5.ຄ່າທຳນຽມ ແລະ ຄ່າບໍລິການ .......................................... 16**

**6.ໄລຍະເວລາຂອງການພິຈາລະນາ .......................................... 16**

1. ເຄື່ອງສຳອາງແມ່ນຫຍັງ?

ຜະລິດຕະພັນເຄື່ອງສຳອາງໝາຍເຖິງ: ວັດຖຸທີ່ໃຊ້ສຳລັບທາ, ຖູ, ນວດ, ໂຮຍ, ພົ່ນ, ຢອດໃສ່, ອົບ ຫຼື ກະທຳດ້ວຍວິທີໃດໜຶ່ງຕໍ່ສ່ວນໃດສ່ວນໜຶ່ງພາຍນອກຂອງຮ່າງກາຍຂອງຄົນເພື່ອຄວາມສະອາດສວຍງາມ ຫຼື ສົ່ງເສີມໃຫ້ເກີດຄວາມສວຍງາມຊຶ່ງລວມທັງວັດຖຸທີ່ມີຈຸດປະສົງໃຊ້ເປັນສ່ວນປະສົມໃນການຜະລິດ ເຄື່ອງສຳອາງໂດຍສະເພາະ ຫຼື ວັດຖຸອື່ນທີ່ກະຊວງສາທາລະນະສຸກກຳນົດໃຫ້ເປັນເຄື່ອງສຳອາງແຕ່ບໍ່ໄດ້ກວມ ເອົາເຄື່ອງປະດັບເອ້.

2. ການຈັດປະເພດເຄື່ອງສຳອາງ

ຜະລິດຕະພັນເຄື່ອງສຳອາງແບ່ງເປັນ 5 ໝວດຄື:

- ຜະລິດຕະພັນສຳລັບຜິວໜັງ
- ຜະລິດຕະພັນສຳລັບຜົມ
- ຜະລິດຕະພັນສຳລັບມື ແລະ ເລັບ
- ຜະລິດຕະພັນສຳລັບປາກ ແລະ ແຂ້ວ (ຍົກເວັ້ນແປງສີແຂ້ວ, ໄມ້ຈີ້ມແຂ້ວ)
- ຜະລິດຕະພັນນ້ຳຫອມ (ຍົກເວັ້ນນ້ຳຫອມທີ່ບໍ່ສີດໃສ່ຄົນ)

3. ເງື່ອນໄຂຂອງຫົວໜ່ວຍທຸລະກິດທີ່ສາມາດຈົດແຈ້ງ

- ຫົວໜ່ວຍທຸລະກິດທີ່ມີຈຸດປະສົງຢາກດຳເນີນການຈົດແຈ້ງຜະລິດຕະພັນເຄື່ອງສຳອາງ ຕ້ອງດຳເນີນການສ້າງຕັ້ງບໍລິສັດ ຂາເຂົ້າ-ຂາອອກ ຕາມລະບຽບການ ຂອງຂະແໜງການກ່ຽວຂ້ອງວາງອອກ ເຊັ່ນ: ເປັນບໍລິສັດທີ່ດຳເນີນທຸລະກິດຖືກຕ້ອງຢູ່ ສປປ ລາວ ໃນໃບທະບຽນວິສາຫະກິດ ຕ້ອງລະບຸວ່າ ສາມາດ ນຳເຂົ້າເຄື່ອງສຳອາງໄດ້.
- ມີສະຖານທີ່ເກັບຮັກສາທີ່ເໝາະສົມ ແລະ ມີສິ່ງອຳນວຍຄວາມສະດວກທີ່ຈຳເປັນ ເພື່ອຮັບປະກັນຄຸນນະພາບຂອງຜະລິດຕະພັນເຄື່ອງສຳອາງເຊັ່ນ: ມີສາງເກັບຮັກສາທີ່ໄດ້ມາດຕະຖານ, ມີລະບົບລະບາຍອາກາດ, ມາດຕະການປົກປັກຮັກສາຄວາມປອດໄພ ແລະ ສິ່ງແວດລ້ອມ.

4. ເອກະສານທີ່ຕ້ອງປະກອບໃນການຂໍຈົດແຈ້ງ

ລວມທັງໝົດມີ 10 ເອກະສານຄື: ໃບສະເໜີ, ແບບຟອມຈົດແຈ້ງ, ສູດຕາລາ, ໃບມອບສິດ, ໃບຢັ້ງຢືນການວິໄຈ, ໃບຢັ້ງຢືນການຜະລິດທີ່ດີ, ລາຍລະອຽດຂອງສະຫຼາກ ແລະ ເລກລະຫັດຂອງຜະລິດຕະພັນ, ສະຫຼຸບຫຍໍ້ຂໍ້ມູນທາງດ້ານວິທະຍາສາດເພື່ອຢັ້ງຢືນການກ່າວອ້າງການນຳໃຊ້, ສະຫຼຸບຫຍໍ້ທາງດ້ານຜົນສະທ້ອນຕໍ່ສຸຂະພາບ ແລະ ສະຫຼຸບຫຍໍ້ການປະເມີນຄວາມປອດໄພ.

ລາຍລະອຽດ ແລະ ຕົວຢ່າງຂອງແຕ່ລະເອກະສານມີດັ່ງລຸ່ມນີ້:

4.1 ໃບສະເໜີ

ສາມາດດາວໂຫຼດແບບຟອມຮ່າງໃບສະເໜີ ຈາກ www.fdd.gov.la

ຕື່ມຂໍ້ມູນໃສ່ໃນບ່ອນຫວ່າງໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ໃສ່ເລກທີເອກະສານ, ລົງວັນທີ, ລົງລາຍເຊັນ ພ້ອມທັງຈ້ຳກາຂອງບໍລິສັດ ກ່ອນຈະຍື່ນເອກະສານ

ຕົວຢ່າງໃບສະເໜີ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ........................ ເລກທີ...........................................

ໂທລະສັບ..................... ນະຄອນຫຼວງວຽງຈັນ, ວັນທີ:.............................

ມືຖື...........................

E-mail:.....................

**ໜັງສືສະເໜີ**

**ຮຽນ:** ທ່ານຫົວໜ້າກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ

**ເລື່ອງ:** ຂໍອະນຸຍາດຈົດແຈ້ງຜະລິດຕະພັນເຄື່ອງສຳອາງທີ່ນຳເຂົ້າຈາກຕ່າງປະເທດ.

ຂ້າພະເຈົ້າ..........................................ຕຳແໜ່ງ.......................................ມີສຳນັກງານ ຕັ້ງຢູ່ຖະໜົນ.........................ບ້ານ...................., ເມືອງ...................... ແຂວງ.....................

ຖືທະບຽນວິສາຫະກິດເລກທີ.....................ລົງວັນທີ....................

ມີຈຸດປະສົງຂໍຈົດແຈ້ງຜະລິດຕະພັນເຄື່ອງສຳອາງ ຈຳນວນ........ລາຍການ ທີ່ນຳເຂົ້າມາຈາກປະເທດ.................. ດັ່ງລາຍລະອຽດລຸ່ມນີ້:

1. .............................
2. .............................

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານພິຈາລະນາຕາມທາງຄວນດ້ວຍ.

**ອຳນວຍການບໍລິສັດ**

ຕື່ມຂໍ້ມູນໃສ່ໃນບ່ອນຫວ່າງ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

## 4.2 ແບບຟອມຈົດແຈ້ງ

1. ດາວໂຫຼດແບບຟອມຈົດແຈ້ງ ຈາກເວບໄຊກົມອາຫານ ແລະ ຢາ www.fdd.gov.la

2. ນຳໃຊ້ແບບຟອມຈົດແຈ້ງໃນຮູບແບບ Word

3. ຕື່ມຂໍ້ມູນໃສ່ໃນຫ້ອງວ່າງໃຫ້ຖືກຕ້ອງ ແລະ ຄົບຖ້ວນ (ເຊິ່ງຕ້ອງເປັນພາສາອັງກິດເທົ່ານັ້ນ).

ຕົວຢ່າງແບບຟອມຈົດແຈ້ງ


Appendix 1

June 07 r2

ASEAN Cosmetic Directive

FOR OFFICIAL USE
Date received: / /
Product Notification No.:

TEMPLATE FOR NOTIFICATION OF COSMETIC PRODUCT

☑ *Tick where applicable*

PARTICULARS OF PRODUCT

ລັກສະນະຂອງຜະລິດຕະພັນ

Name of brand & product

ຊື່ຍີ່ຫໍ້ແລະຜະລິດຕະພັນ

1.1 Brand
ຍີ່ຫໍ້

1.2 Product Name
ຊື່ຜະລິດຕະພັນ

1.3 List of Variants or Shade Names
ລາຍການບັນຊີ ຫຼື ລາຍການຜະລິດຕະພັນຍ່ອຍ

2. Product type(s)
ປະເພດຜະລິດຕະພັນ

- ☐ Creams, emulsions, lotions, gels and oils for skin (hands face, feet, etc.)
  ຄີມ, ນ້ຳມັນອີມູຊັນ, ຄີມບຳລຸງ, ເຈວ ແລະ ນ້ຳມັນສຳລັບຜິວ (ມື, ໜ້າ, ຕີນ ແລະ ອື່ນໆ)
- ☐ Face masks (with the exception of chemical peeling products)
- ☐ Tinted bases (liquids, pastes, powders)
- ☐ Make-up powders, after-bath powder, hygienic powders, etc.
  ແປ້ງທາໜ້າ, ແປ້ງທາໂຕ, ແປ້ງອະນາໄມ ແລະ ອື່ນໆ
- ☐ Toilet soaps, deodorant soaps, etc
  ສະບູອາບນ້ຳ, ສະບູດັບກິ່ນກາຍ ແລະ ອື່ນໆ

Page 1 of 8

ຕື່ມຂໍ້ມູນໃສ່ໃນຫ້ອງເປົ່າຫວ່າງ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ຕື່ມຂໍ້ມູນຂອງ ສີ: CI 12420 ….
ຫຼື ກິ່ນຫອມ: Lavender, Rose…
ຫຼື ຂະໜາດບັນຈຸເຊັ່ນ: 10ml, 200ml…

ໝາຍຕິກ (☑) ໃສ່ໃນຫ້ອງຂອງປະເພດ ຜະລິດຕະພັນທີ່ນຳມາຈົດແຈ້ງ

ໝາຍເຫດ 1: ໃນ ຂໍ້ 1.3 ໃຫ້ເລືອກເອົາ ໜຶ່ງໃນ 3 ກໍລະນີດັ່ງລຸ່ມນີ້

ກໍລະນີທີ 1: ຜະລິດຕະພັນທີ່ມສ່ວນປະກອບດຽວກັນ ແຕ່ຕ່າງສີ ຕົວຢ່າງ: ສີທາເລັບ ຫຼື ລິບສະຕິກ ທີ່ຈະຕ້ອງລະບຸລະອຽດສີທີ່ຈະນຳມາຈົດແຈ້ງ ເຊັ່ນ: CI 12420, CI14700 …

ກໍລະນີທີ 2: ຜະລິດຕະພັນທີ່ມສ່ວນປະກອບດຽວກັນ ແຕ່ຕ່າງກິ່ນຫອມ ຕົວຢ່າງ: ນ້ຳຫອມ ຜູ້ປະກອບການຈະຕ້ອງລະບຸລະອຽດກິ່ນຫອມທີ່ຈະນຳມາຈົດແຈ້ງ ເຊັ່ນ: Lavender, Rose…

ກໍລະນີທີ 3: ຜະລິດຕະພັນທີ່ມີສ່ວນປະກອບດຽວ ແມ່ນໃຫ້ລະບຸທຸກຂະໜາດບັນຈຸທີ່ຈະນຳມາຈົດແຈ້ງ
ເຊັ່ນ: 10ml, 20ml, 50ml, 100ml, 200ml, 500ml …



Appendix 1

June 07 r2

- ☐ Depilatories
  ຜະລິດຕະພັນກຳຈັດຂົນ
- ☐ Deodorants and anti-perspirants
  ດັບກິ່ນ ແລະ ກຳຈັດເຫື່ອ
- ☐ Hair care products
  ຜະລິດຕະພັນບົກບົວງເສັ້ນຜົມ
  - hair tints and bleaches (including permanent hair dyes)
    ສີຍ້ອມຜົມ ແລະ ປອກສີຜົມ
  - products for waving, straightening and fixing,
    ຜະລິດຕະພັນດັດຜົມ, ຢືດຜົມ ແລະ ສ້ອມແຊມຜົມ.
  - setting products,
    ຜະລິດຕະພັນຈັດຊົງຜົມ
  - cleansing products (lotions, powders, shampoos),
    ຜະລິດຕະພັນທຳຄວາມສະອາດ (ຄີມບຳລຸງ, ແປ້ງ, ຢາສະຜົມ)
  - conditioning products (lotions, creams, oils),
    ຜະລິດຕະພັນເພື່ອສຸຂະພາບຜົມ (ຄີມບຳລຸງ, ຄີມ, ນ້ຳມັນ)
  - hairdressing products (lotions, lacquers, brilliantines)
    ຜະລິດຕະພັນຈັດແຕ່ງຊົງຜົມ (ຄີມບຳລຸງ, ເຄືອບເງົາ )
- ☐ Shaving product (creams, foams, lotions, etc.)
  ຜະລິດຕະພັນແຖໜວດ (ຄີມ, ຟອງ, ຄີມບຳລຸງ ແລະ ອື່ນໆ)
- ☐ Products for making-up and removing make-up from the face and the eyes
  ຜະລິດຕະພັນສຳລັບບົກບົດ ແລະ ກົບແຕ່ງ ໜ້າ ແລະ ຕາ
- ☐ Products intended for application to the lips
  ຜະລິດຕະພັນ ລິບສະຕິກ
- ☐ Products for care of the teeth and the mouth
  ຜະລິດຕະພັນຮັກສາແຂ້ວ ແລະ ປາກ
- ☐ Products for nail care and make-up
  ຜະລິດຕະພັນ ສຳລັບບຳລຸງເລັບ ແລະ ສີທາເລັບ
- ☐ Products for external intimate hygiene (exclude personal lubricant)
  ຜະລິດຕະພັນ ສຳລັບອະນາໄມຊ່ອງຄອດ
- ☐ Sunbathing products
  ຜະລິດຕະພັນ ສຳລັບການອາບແດດ
- ☐ Products for tanning without sun.
  ຜະລິດຕະພັນປຽນສີຜິວ
- ☐ Skin whitening products
  ຜະລິດຕະພັນ ເຮັດໃຫ້ຜິວຂາວ
- ☐ Anti-wrinkle products
  ຜະລິດຕະພັນ ລົບຮອຍຫ່ຽວ-ຕີນກາ
- ☐ Others (please specify)
  ແລະ ອື່ນໆ (ກະລຸນາລະບຸລາຍລະອຽດ)

________________________________________

Page 2 of 8

ໃນກໍລະນີທີ່ຜະລິດຕະພັນທີ່ຈະນຳມາຈົດແຈ້ງ ບໍ່ນອນໃນຂໍ້ທີ່ລະບຸໄວ້ໃນຂ້າງເທິງແມ່ນໃຫ້ຕິກ (☑)ໃສ່ໃນຫ້ອງອື່ນໆ

ຕົວຢ່າງ: Sanitary (ຜ້າອະນາໄມ)

ລະບຸຈຸດປະສົງຂອງການນຳໃຊ້

ຕົວຢ່າງ: Apply to skin

ເລືອກຮູບແບບຂອງຜະລິດຕະພັນ ແລ້ວໝາຍຕິກ (☑) ໃສ່ໃນຫ້ອງຂອງປະເພດ ຜະລິດຕະພັນທີ່ນຳມາຈົດແຈ້ງ

ລະບຸຊື່ໂຮງງານຜະລິດ
ຕົວຢ່າງ: Cosmetic Co.,Ltd

ລະບຸສະຖານທີ່ຂອງໂຮງງານຜະລິດ

ຕົວຢ່າງ: Simuang Road, Thadkhao Village, Sisattanak Distric, Vientiane, Lao PDR


Appendix 1

June 07 r2

3. Intended use
ຈຸດປະສົງຂອງການນຳໃຊ້

4. Product presentation(s)
ຮູບແບບຂອງຜະລິດຕະພັນ

- ☐ Single product
  ຜະລິດຕະພັນດ່ຽວ
- ☐ A range of product variants similar in composition for the same use but differs in colours, flavours etc.
  ຜະລິດຕະພັນທີ່ມີສ່ວນປະກອບຄ້າຍຄືກັນເພື່ອນຳໃຊ້ໃນຈຸດປະສົງດຽວກັນແຕ່ຕ່າງສີ, ກິ່ນ...
- ☐ Palette(s) in a range of one product type
  ເປັນພາເລດຂອງຜະລິດຕະພັນດຽວກັນ
- ☐ Combination products in a single kit
  ຜະລິດຕະພັນປະສົມຢູ່ໃນຊຸດດຽວກັນ
- ☐ Others (please specify)
  ແລະ ອື່ນໆ (ກະລຸນາລະບຸລາຍລະອຽດ)

[1]PARTICULARS OF MANUFACTURER (S)/ASSEMBLER(S)
[Please attach in a separate sheet if there are more than one manufacturer/assembler]
ລັກສະນະຂອງຜູ້ຜະລິດ/ຜູ້ບັນຈຸ
[ກະລຸນາແນບເອກະສານທີ່ຕິດຕໍ່ ຫາກຜູ້ຜະລິດ/ຜູ້ບັນຈຸມີຫຼາຍກວ່າ 01]

5. Name of manufacturer:
ຊື່ເຈົ້າຂອງຜູ້ຜະລິດ

Address of manufacturer (state country):
ທີ່ຢູ່ຂອງຜູ້ຜະລິດ ( ລະບຸປະເທດພ້ອມ )

[1] A manufacturer is a company which is engaged in any process carried out in the course of making the cosmetic product. The manufacturing process includes all operations of purchase of starting materials, bulk intermediates and products, formulation and production (such as grinding, mixing, encapsulation and/or packaging), quality control, release, storage and distribution of cosmetic products and the related controls.

A primary assembler is a company which is engaged in a process of enclosing the product in a primary/immediate container which is labelled or to be labelled before the product is sold or supplied in it.

A secondary assembler is a company which is engaged only in a process of labelling the product container where the product is already enclosed in its primary container and/or packing the product which is already enclosed in its labelled primary container into a carton which is labelled or to be labelled, before the product is sold or supplied.

Page 3 of 8

ໝາຍເຫດ: ໃນຂໍ້ 4 ໃຫ້ເລືອກຕິກ (☑) ເອົາໜຶ່ງໃນສີ່ກໍລະນີລຸ່ມນີ້:

| ຮູບແບບຂອງຜະລິດຕະພັນ | ຕົວຢ່າງ |
|---|---|
| **ຜະລິດຕະພັນດ່ຽວ** ໝາຍເຖິງ ຜະລິດຕະພັນທີ່ມີສູດຕຳລາດຽວເທົ່ານັ້ນ |  |
| **ຜະລິດຕະພັນທີ່ມີສ່ວນປະກອບຄ້າຍຄືກັນ** ເພື່ອນຳໃຊ້ໃນຈຸດປະສົງດຽວກັນແຕ່ຕ່າງສີ ແລະ ກິ່ນ ໝາຍເຖິງ ຜະລິດຕະພັນທີ່ມີສ່ວນປະກອບຫຼັກດຽວກັນ (ຢູ່ໃນກັບກ່ອງຕ່າງກັນ) ແລະ ການນຳໃຊ້ຄືກັນ ແຕ່ແຕກຕ່າງກັນທີ່ສີ ແລະ ກິ່ນ |  |
| **ເປັນພາເລດຂອງຜະລິດຕະພັນດຽວກັນ** ໝາຍເຖິງ ຜະລິດຕະພັນທີ່ນຳໃຊ້ຄືກັນ ແຕ່ມີຫຼາຍສີ ຫຼື ກິ່ນ ທີ່ຢູ່ໃນກັບກ່ອງດຽວກັນ |  |
| **ຜະລິດຕະພັນປະສົມໃນຊຸດດຽວກັນ** ໝາຍເຖິງ ຜະລິດຕະພັນທີ່ມີຫຼາຍຮູບແບບຕ່າງກັນ ແຕ່ຢູ່ໃນກັບກ່ອງດຽວກັນ |  |

ໝາຍເຖິງ ໂຮງງານມີການຜະລິດ ເລີ່ມແຕ່ ຂັ້ນຕອນທຳອິດຈົນເປັນຜະລິດຕະພັນສຳເລັດຮູບ

ໝາຍເຖິງ ໂຮງງານນຳເອົາຜະລິດຕະພັນເຄິ່ງສຳເລັດຮູບມາແບ່ງບັນຈຸ, ມັດຫໍ່ຄືນ ຫຼື ປ່ຽນເຄື່ອງຫຸ້ມຫໍ່ ຈົນເປັນຜະລິດຕະພັນສຸດທ້າຍ



Appendix 1

June 07 r2

Country

Tel : Fax:

6. Name of assembler (Please tick accordingly. May tick more than one box):
ຊື່ຜູ້ບັນຈຸ (ກະລຸນາໝາຍຕິກໃຫ້ຖືກຕ້ອງ. ອາດຈະໝາຍຕິກໃສ່ຫຼາຍກວ່າໜຶ່ງຫ້ອງ)

☐ Primary assembler ☐ Secondary assembler
ຜູ້ບັນຈຸທຳອິດ ຜູ້ບັນຈຸທີສອງ

Address of assembler (state country):
ທີ່ຢູ່ຂອງຜູ້ບັນຈຸ (ໃຫ້ລະບຸປະເທດນຳ)

Country

Tel: Fax:

**PARTICULARS OF LOCAL COMPANY RESPONSIBLE FOR PLACING THE COSMETIC PRODUCT IN THE MARKET**
ລາຍລະອຽດຂອງບໍລິສັດຜູ້ຮັບຜິດຊອບການວາງຈຳໜ່າຍຜະລິດຕະພັນຢູ່ທ້ອງຕະຫຼາດ

7. Name of company:
ຊື່ຂອງບໍລິສັດ

Address of company:
ທີ່ຢູ່ຂອງບໍລິສັດ

Tel: Fax:

Business Registration Number /License to Operate Number (if applicable, submit a copy of the Business Registration Certificate):
ເລກທະບຽນທຸລະກິດ/ໃບອະນຸຍາດດຳເນີນທຸລະກິດ (ສັດຕິດໃບຢັ້ງຢືນສິນທະບຽນທຸລະກິດ)

Page 4 of 8

ລະບຸຊື່ບໍລິສັດ ຕາມໃບທະບຽນວິສາຫະກິດ

ຕົວຢ່າງ: Lao Compay Limited

ລະບຸສະຖານທີ່ຂອງບໍລິສັດທີ່ຕ້ອງການມາຈົດແຈ້ງ

ຕົວຢ່າງ: Simuang Road, Simuang Village, Sisattanak Distric, Vientiane,

ໝາຍເຫດ: ຂໍ້ 6 ແມ່ນສາມາດໝາຍໄດ້ພຽງແຕ່ຫ້ອງດຽວເທົ່ານັ້ນ

ລະບຸຊື່ຂອງອຳນວຍການບໍລິສັດ ຫຼື ວິຊາການ ຫຼື ບຸກຄົນທີ່ສາມາດຕິດຕໍ່ພົວພັນໄດ້


Appendix 1

June 07 r2

**PARTICULARS OF PERSON REPRESENTING THE LOCAL COMPANY**
ລາຍລະອຽດຂອງບຸກຄົນຜູ້ຕາງໜ້າບໍລິສັດທີ່ຈໍາໜ່າຍໃນທ້ອງຖິ່ນ

8. Name of person:
ຊື່ບຸກຄົນ

Tel: Email:

Designation in the company:
ຕໍາແໜ່ງພາຍໃນບໍລິສັດ

Note: If the applicant is a service provider authorised by the company, he is required to provide a letter of authorisation or any additional particulars as required by the regulatory authority.
ໝາຍເຫດ: ຖ້າຜູ້ທີ່ສະໜີແມ່ນເປັນຜູ້ສະໜອງການບໍລິການທີ່ໄດ້ຮັບອະນຸຍາດຈາກບໍລິສັດ, ຄວນມີໜັງສືມອບສິດທາງການຈາກບໍລິສັດ ຫຼື ລາຍລະອຽດເພີ່ມເຕີມການຮຽກຮ້ອງຂອງເຈົ້າໜ້າທີ່ຄຸ້ມຄອງ

**PARTICULARS OF IMPORTER**
ລາຍລະອຽດຂອງຜູ້ນໍາເຂົ້າ

9. Name of Importer:
ຊື່ຜູ້ນໍາເຂົ້າ

Address of importer:
ທີ່ຢູ່ຂອງຜູ້ນໍາເຂົ້າ

Tel: Fax:

Page 5 of 8

ລະບຸຊື່ ແລະ ທີ່ຢູ່ຂອງບໍລິສັດທີ່ມີສິດນຳເຂົ້າ

ໝາຍເຫດ: ຂໍ້ 9 ໃນກໍລະນີທີ່ມີຫຼາຍບໍລິສັດນຳເຂົ້າ ຕ້ອງໄດ້ແຈ້ງຊື່ ແລະ ທີ່ຢູ່ຂອງທຸກບໍລິສັດທີ່ມີສິດນຳເຂົ້າ ໃຫ້ຄົບຖ້ວນ (ສາມາດ Copy & Paste ເພີ່ມໃສ່ໃນແບບຟອມ)

ຜູ້ທີ່ມາຈົດແຈ້ງ ຕ້ອງອ່ານຄຳປະຕິຍານໃນຂໍ້ 10 ຫຼັງຈາກນັ້ນໝາຍຕິກ ☑ ໃນຫ້ອງເປົ່າຫວ່າງທັງ 2 ຫ້ອງ ເພື່ອຮັບຮູ້, ເຂົ້າໃຈ ແລະ ພ້ອມປະຕິບັດຕາມລະບຽບທີ່ວາງອອກ

Appendix 1

June 07 r2

**PRODUCT INGREDIENT LIST**
**ລາຍລະອຽດສ່ວນປະກອບຂອງຜະລິດຕະພັນ**

10. Please check the following boxes
ກະລຸນາກວດເບິ່ງຊ່ອງດັ່ງລຸ່ມນີ້:

☐ I have examined the latest revisions of the Annexes II to VII of the ASEAN Cosmetic Ingredient Listing as published in the latest amendment of the ASEAN Cosmetic Directive and confirmed that the product in this notification does not contain any prohibited substances and is in compliance with the restrictions and conditions stipulated in the Annexes.

ຂ້າພະເຈົ້າໄດ້ກວດກາ, ທົບທວນຫຼັກສູດຂອງທ້າຍຊ້ອນທ້າຍ, 2 ຫາ 7 ຂອງບັນຊີສ່ວນປະສົມເຄື່ອງສຳອາງອາຊຽນຕາມທີ່ໄດ້ລະບຸຢູ່ໃນການປັບປຸງຫຼ້າສຸດຂອງຄູ່ມືເຄື່ອງສຳອາງອາຊຽນ ແລະ ຢັ້ງຢືນວ່າຜະລິດຕະພັນທີ່ນຳມາຈົດແຈ້ງນີ້ບໍ່ໄດ້ບັນຈຸສານຕ້ອງຫ້າມໃດໆເລີຍ ແລະ ສອດຄ່ອງກັບຂໍ້ຫ້າມ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ໃນບົດຊ້ອນທ້າຍຕ່າງໆ

☐ I undertake to respond to and cooperate fully with the regulatory authority with regard to any subsequent post-marketing activity initiated by the authority.

ຂ້າພະເຈົ້າຍິນດີປະຕິບັດ ແລະ ຮ່ວມມືກັບເຈົ້າໜ້າທີ່ຄຸ້ມຄອງລະບຽບການກ່ຽວກັບການດຳເນີນການຕິດຕາມພາຍຫຼັງການຈຳໜ່າຍ

**[To submit ingredient list with percentages of restricted ingredients as required by member country]**
[ໃຫ້ບອກສ່ວນປະສົມພ້ອມດ້ວຍເປີເຊັນ ຂອງສ່ວນປະກອບທີ່ຈຳກັດໃຫ້ໃຊ້ອີງຕາມແຕ່ລະປະເທດ]

| No<br>ລຳດັບ | Full Ingredient name (use INCI or approved nomenclature in standard references)<br>ຊື່ເຕັມຂອງສ່ວນປະກອບ (ໃຫ້ໃຊ້ INCI ຫຼື ຊື່ນາມກະຖານທີ່ສາກົນຮັບຮູ້) |
|---|---|
| | |
| | |
| | |
| | |
| | |
| | |
| | |
| | |
| | |
| | |
| | |
| | |
| | |

ລະບຸບັນດາສ່ວນປະກອບທັງໝົດທີ່ໃຊ້ໃນເຄື່ອງສຳອາງໂດຍອາດຈະລະບຸເປີເຊັນຂອງແຕ່ລະສ່ວນປະກອບ (ຖ້າຕ້ອງການ)

Page 6 of 8

Appendix 1

June 07 r2

**DECLARATION**

1. I hereby declare on behalf of the company I represent that the product in the notification meets all the requirements of *ASEAN Cosmetic* Directive (ACD), its Annexes and Appendices which have been transposed into the local legislation.

2. I undertake to:
   i. Ensure that the product's technical and safety information is made readily available to the regulatory authority concerned ("the Authority") and to keep records of the distribution of the products for product recall purposes;
   ii. Notify the Authority of fatal or life threatening serious adverse event[2] as soon as possible by telephone, facsimile transmission, email or in writing, and in any case, no later than 7 calendar days after first knowledge;
   iii. Complete the Adverse Cosmetic Event Report Form[3] within 8 calendar days from the date of my notification to the Authority in para 2ii. above, and to provide any other information as may be requested by the Authority;
   iv. Report to the Authority of all other serious adverse events that are not fatal or life threatening as soon as possible, and in any case, no later than 15 calendar days after first knowledge, using the Adverse Cosmetic Event Report Form;
   v. Notify the Authority of any change in the particulars submitted in this notification;
   vi. Recall the product from the market, and discontinue selling or supplying the product, as directed by the Authority.

3. I declare that the particulars given in this notification are true, all data, and information of relevance in relation to the notification have been supplied and that the documents enclosed are authentic or true copies.

4. I understand that I shall be responsible for ensuring that each consignment of my product continues to meet all the legal requirements, and conforms to all the standards and specifications of the product that I have declared to the Authority.

5. I understand that I cannot place reliance on the acceptance of my product notification by the authority in any legal proceedings concerning my product, in the event that my product has failed to conform to any of the standards or specifications that I had previously declared to the Authority.

ລາຍເຊັນຂອງບຸກຄົນທີ່ລະບຸໃນຂໍ້ 8

______________________________

[Name and Signature of person representing the local company]
[ບຸຄົນຜູ້ຕາງໜ້າບໍລິສັດທີ່ຈຳໜ່າຍໃນທ້ອງຖິ່ນ]

ກາຈ້ຳຂອງບໍລິສັດທີ່ຂໍຈົດແຈ້ງ

______________

[Company stamp] ກາປະທັບ

Date ວັນທີ ເດືອນ ປີ

ລົງວັນທີ ເດືອນປີ ໃຫ້ຄົບຖ້ວນ

[2] As defined in the Guide Manual for the Industry on Adverse Event Reporting of Cosmetics Products
[3] Set out in Appendix I to the Guide Manual for the Industry on Adverse Event Reporting of Cosmetics Products

Page 7 of 8

4.3 ເອກະສານທີ່ຕ້ອງຄັດ ຕິດເພື່ອຂໍຈົດແຈ້ງ (ຂໍຈາກໂຮງງານ ຫຼື ບໍລິສັດທີ່ເປັນເຈົ້າຂອງຜະລິດຕະພັນ) ເຊິ່ງປະກອບມີ 11 ເອກະສານດັ່ງລຸ່ມນີ້:

4.3.1 ສູດຕຳລາ ຫຼື ສ່ວນປະກອບທັງໝົດຂອງຜະລິດຕະພັນ *(Formulation)*

ຂໍ້ມູນຂອງສູດຕຳລາ ຫຼື ສ່ວນປະກອບ ຢ່າງໜ້ອຍຈະຕ້ອງປະກອບດ້ວຍ:

– ຊື່ສານເຄມີ ທີ່ເປັນຊື່ເອກະພາບສາກົນ

- ໜ້າທີ່ການຂອງແຕ່ລະສານເຄມີ
- ລະບຸປະລິມານ ຫຼື ເປີເຊັນຂອງສານເຄມີທີ່ຈຳກັດປະລິມານໃຊ້
- ສ່ວນປະກອບຂອງເຄື່ອງສຳອາງ ຕ້ອງລະບຸປະລິມານແຕ່ຫຼາຍຫາໜ້ອຍ

ຕົວຢ່າງ:

FORMULATION/ສູດຕຳລາ

Manufacture/ໂຮງງານຜະລິດ:
Product name/ຊື່ຜະລິດຕະພັນ:

| No | Ingredient (INCI Name) | CAS Number | Function | % of Restricted Ingredient |
|---|---|---|---|---|
| ລຳດັບ | ຊື່ສານເຄມີ ທີ່ເປັນຊື່ຊື່ເອກະພາບສາກົນ | ລະຫັດສານເຄມີ | ໜ້າທີ່ຂອງແຕ່ລະສານເຄມີ | ເປີເຊັນການນຳໃຊ້ແຕ່ລະສານເຄມີ |
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| 11 | | | | |
| 12 | | | | |
| 13 | | | | |
| 14 | | | | |
| 15 | | | | |
| 16 | | | | |
| 17 | | | | |
| 18 | | | | |
| 19 | | | | |
| 20 | | | | |
| 21 | | | | |
| 22 | | | | |
| 23 | | | | |
| 24 | | | | |
| | | | Total/ລວມ | 100 |

ຕຸ້ມຢັ້ງຢືນຈາກໂຮງງານ/ເຈົ້າຂອງ
ຜະລິດຕະພັນ

4.3.2 ໃບມອບສິດຈາກເຈົ້າຂອງຜະລິດຕະພັນ ຫຼື ຈາກໂຮງງານຜະລິດ *(Authorization Letter).*

ເຈົ້າຂອງຜະລິດຕະພັນ ຫຼື ໂຮງງານຜະລິດ ຈະຕ້ອງເຮັດໜັງສືຢ່າງເປັນທາງການ ເພື່ອຢັ້ງຢືນການມອບສິດໃນການນຳເຂົ້າ ແລະ ຈຳໜ່າຍໃຫ້ແກ່ຕົວແທນຈຳໜ່າຍຢູ່ ສປປ ລາວ ແລະ/ຫຼື ສາຂາຂອງບໍລິສັດຕົວແທນຈຳໜ່າຍ.

ຕົວຢ່າງ

[Company Letterhead]

Date

Subject: Authorization Letter

Company Name…………..

To whom it may concern:

This is to authorize (Name of authorized representative), (Designation) as this company's representative in notifying the cosmetic products we intend to place in the local market. . We undertake to bear the responsibility in ensuring that our products comply to the local regulations and the latest standards according to the ASEAN Cosmetic Directive.

Signed,

(Name and signature of the director, owner, or general manager of the company)

[Company Stamp or Logo]

(Name and signature of the authorized representative)

4.3.3 ໃບຢັ້ງຢືນການຈົດແຈ້ງຈາກປະເທດຜູ້ຜະລິດ *(Certificate of Notification)*

4.3.4 ໃບຢັ້ງຢືນການວິໄຈ *(Certificate of Analysis)*

4.3.5 ໃບຢັ້ງຢືນການຜະລິດທີ່ດີ *(GMP Certificate).*

- ໝວດຜະລິດຕະພັນທີ່ມີຄວາມສ່ຽງສູງ: ບໍລິສັດຕ້ອງໄດ້ປະກອບ ໃບຢັ້ງຢືນການຜະລິດທີ່ດີ *(GMP Certificate)* ໃຫ້ເຈົ້າໜ້າທີ່ໃນເວລາຂໍຈົດແຈ້ງ.
- ສ່ວນໝວດຜະລິດຕະພັນທີ່ມີຄວາມສ່ຽງກາງ ແລະ ຕໍ່າ: ແມ່ນບໍ່ຈຳເປັນຕ້ອງປະກອບໃນເວລາຂໍຈົດແຈ້ງ ແຕ່ຕ້ອງມີເກັບມ້ຽນ ຫຼື ສຳເນົາໄວ້ຢູ່ບໍລິສັດ ຫຼື ໂຮງງານ.

ລາຍການສິນຄ້າທີ່ມີຄວາມສ່ຽງສູງລວມມີດັ່ງລຸ່ມນີ້:

| HS Code | ລາຍການສິນຄ້າ | DESCRIPTIONS |
|---|---|---|
| 3808.94.90.00 | ນ້ຳຢາລ້າງມືທີ່ມີສ່ວນປະສົມຂອງເຫຼົ້າ | Hand sanitizers |
| 3304.10.00.00 | ຜະລິດຕະພັນທີ່ມີຈຸດປະສົງໃຊ້ທາຮີມສົບ | Products intended for application to the lips |
| 3304.20.00.00 | ຜະລິດຕະພັນເພື່ອການເສີມສວຍສຳລັບຕາ | Eye make-up preparations |

| | | |
|---|---|---|
| 3304.99.30.00 | ຄຣີມ ຫຼື ຜະລິດຕະພັນໃຊ້ທາເຮັດໃຫ້ຜິວໜັງເປັນສີນ້ຳຕານ ໂດຍບໍ່ຈຳເປັນຕາກແດດ | Products for tanning without sun. |
| 3304.99.30.00 | ຄຣີມ ຫຼື ຜະລິດຕະພັນໃຊ້ທາກັນແດດ | Sunbathing products |
| 3304.99.30.00 | ຄຣີມ ຫຼື ຜະລິດຕະພັນເຮັດໃຫ້ຜິວຂາວ | Skin whitening products |
| 3304.99.30.00 | ຄຣີມ ຫຼື ຜະລິດຕະພັນລຶບຮອຍຫ່ຽວ | Anti-wrinkle products |
| 3305.10.10.00 | ຢາສະຜົມ ທີ່ມີສ່ວນປະສົມຂອງຢາຂ້າເຊື້ອລາ | Shampoo having anti-fungal properties |
| 3306.90.00.00 | ຜະລິດຕະພັນສຳລັບແຂ້ວ ແລະ ປາກ (ຢາຖູແຂ້ວ, ແປ້ງຖູແຂ້ວ, ນ້ຳຢາບ້ວນປາກ, ດັບກິ່ນປາກ, ຜະລິດຕະພັນສຳລັບແຂ້ວທີ່ເປັນ ທາດແຂງ ແລະ ທາດແຫຼວ | Products for care of the teeth and the mouth (Tooth pastes, tooth powders, mouth washes, mouth sprays, solid and liquid dental preparation) |
| 3401.11.90.00 | ຜະລິດຕະພັນສຳລັບອະນາໄມຊ່ອງຄອດ | products for external intimate hygiene (exclude personal lubricant) |

4.3.6 ລະອຽດຂອງສະຫຼາກ ແລະ ເລກລະຫັດຂອງຜະລິດຕະພັນ *(Labels and Batch Coding System).*

ຕົວຢ່າງ: ລາຍລະອຽດສະຫຼາກ




ຕົວຢ່າງ ເລກລະຫັດຂອງຜະລິດຕະພັນ

Batch Coding System

ເລກລະຫັດການຜະລິດ

ຊື່ຍີ່ຫໍ້/Brand name:

ຊື່ຜະລິດຕະພັນ/Product name:

ລະຫັດການຜະລິດ/Batch coding system:

ເລກລະຫັດ/Batch number: XX/DDMMYY

XX = ເລກລະຫັດ/Batch number

ວວດດປປ/DDMMYY= ວັນເດືອນປີຜະລິດ/Manufacturing date

ວັນໝົດອາຍຸ/Expiry date: ວວດດປປປປ/DDMMYYYY

ຕົວຢ່າງ/Example:

ເລກລະຫັດ/Batch No: 01/0102016 = ເລກລະຫັດ/Batch No: 01

ວັນເດືອນປີຜະລິດ/MFD: 01 ກຸມພາ 2016

01 February 2016

ວັນໝົດອາຍຸ/Expiry date: 01022018 = ວັນໝົດອາຍຸ: 01 ກຸມພາ 2018

Expiry date: 01 February 2018

ເຊັນຢັ້ງຢືນຈາກເຈົ້າຂອງໂຮງງານ

### 4.3.7 ເນື້ອໃນຂອງສະຫຼາກພາສາລາວ

ສະຫຼາກຂອງຜະລິດຕະພັນເຄື່ອງສຳອາງທີ່ນຳເຂົ້າ ແລະ ຜະລິດພາຍໃນ ສປປ ລາວຕ້ອງມີເນື້ອໃນດັ່ງນີ້:

1. ຊື່ຜະລິດຕະພັນ ແລະ ຊື່ການຄ້າ ຕ້ອງມີຂະໜາດໃຫຍ່ກວ່າຂໍ້ຄວາມອື່ນ;
2. ລາຍຊື່ສານເຄມີທຸກຊະນິດ ທີ່ໃຊ້ເປັນສ່ວນປະກອບໃນເຄື່ອງສຳອາງ ຕ້ອງເປັນຊື່ເອກະພາບສາກົນ ເຊິ່ງຕ້ອງກົງກັບສູດຕຳລາທີ່ໄດ້ຈົດແຈ້ງ ແລະ ລຽງລຳດັບຕາມປະລິມານຂອງສານເຄມີແຕ່ຫຼາຍ ຫາໜ້ອຍ;
3. ຂໍ້ແນະນຳສຳລັບການນຳໃຊ້, ຄຳເຕືອນ, ຂໍ້ຫ້າມໃຊ້.
4. ຂະໜາດບັນຈຸ;
5. ການເກັບຮັກສາ;
6. ຊື່ ແລະ ທີ່ຢູ່ຂອງບໍລິສັດຈົດແຈ້ງ (ຖ້າມີ);
7. ຊື່ ແລະ ທີ່ຢູ່ຂອງປະເທດຜູ້ຜະລິດ ຫຼື ລະບຸພຽງແຕ່ປະເທດຜູ້ຜະລິດ;
8. ວັນເດືອນປີຜະລິດ ແລະ ວັນເດືອນປີໝົດອາຍຸ ຫຼື ຂໍ້ຄວາມທີ່ມີຄວາມໝາຍຄ້າຍຄືກັນ;
9. ເລກຊຸດຜະລິດ;
10. ເລກທີຈົດແຈ້ງ (ຖ້າມີຈຸດປະສົງຈະໃສ່).

ໃນກໍລະນີທີ່ຜະລິດຕະພັນເຄື່ອງສຳອາງທີ່ມີຂະໜາດນ້ອຍແມ່ນໃຫ້ລະບຸພຽງຂໍ້ທີ 1, 3, 7 ແລະ 8.




ການກ່າວອ້າງຄຸນປະໂຫຍດໃນສະຫຼາກ ຈະຕ້ອງໃຊ້ຂໍ້ຄວາມທີ່ເປັນທໍາຕໍ່ຜູ້ຊົມໃຊ້ໂດຍຫຼີກເວັ້ນຂໍ້ຄວາມທີ່ອາດຈະກໍ່ໃຫ້ເກີດຄວາມເສື່ອມເສຍຕໍ່ສັງຄົມ ເຊິ່ງລວມມີຂໍ້ຄວາມທີ່ກ່າວອ້າງເຖິງແຫຼ່ງກໍາເນີດ, ຄຸນນະພາບ, ປະລິມານ, ລັກສະນະ ແລະ ອື່ນໆ.

ການໃຊ້ຂໍ້ຄວາມລຸ່ມນີ້ແມ່ນການໃຊ້ຂໍ້ຄວາມທີ່ມີເນື້ອໃນບໍ່ເປັນທໍາຕໍ່ຜູ້ຊົມໃຊ້:

- ຂໍ້ຄວາມທີ່ບໍ່ມີມູນຄວາມຈິງ ຫຼື ເກີນຈິງ;
- ຂໍ້ຄວາມທີ່ກໍ່ໃຫ້ເກີດຄວາມເຂົ້າໃຈຜິດກ່ຽວກັບຂໍ້ມູນທີ່ສໍາຄັນຂອງເຄື່ອງສໍາອາງ ບໍ່ວ່າຈະເປັນການໃຊ້ເອກະສານອ້າງອີງ, ລາຍງານທາງວິທະຍາສາດ, ສະຖິຕິ ແລະ ກະທໍາ ດ້ວຍວິທີການໃດໜຶ່ງທີ່ບໍ່ມີມູນຄວາມຈິງ ຫຼື ເກີນຈິງ;
- ຂໍ້ຄວາມທີ່ສະແດງເຖິງການຊ່ວຍບໍາບັດ, ບັນເທົາ ແລະ ປິ່ນປົວພະຍາດຕ່າງໆ ລວມເຖິງການກະຕຸ້ນທາງເພດ;
- ຂໍ້ຄວາມທີ່ຂັດກັບວັດທະນະທໍາ ກໍ່ໃຫ້ເກີດຄວາມເສື່ອມເສຍ ໂດຍທາງກົງ ແລະ ທາງອ້ອມ

4.3.8 ສະຫຼູບຫຍໍ້ຂໍ້ມູນທາງດ້ານວິທະຍາສາດເພື່ອຢັ້ງຢືນການກ່າວອ້າງການນໍາໃຊ້ *(Claim Support Summary)* ໝາຍເຖິງ ສ່ວນປະກອບຂອງສູດຕໍາລາ ທີ່ອ້າງເຖິງຊັບພະຄຸນຂອງ ຜະລິດຕະພັນຕາມທີ່ລະບຸໄວ້ໃນສະຫຼາກ

ຕົວຢ່າງ: ຢາສະຜົມດໍາຈະຕ້ອງປະກອບມີ ສານທີ່ສາມາດປົກປິດ ຫຼື ຍ້ອມເສັ້ນຜົມໃຫ້ເປັນສີດໍາ

**ABC COSMETICS CO., LTD**

Date: 10/08/2021

**Claim Support Summary**

Product Name: ABC Color Shampoo-Natural Black
The flowing is the claim for Color shampoo

| Claim | Active ingredient |
|---|---|
| Hair colorants | P-Phenylenediamine |
| | Resorcinol |
| | M-Aminophenol |

Signature

Name

Position

4.3.9 ສະຫຼຸບຫຍໍ້ທາງດ້ານຜົນສະທ້ອນຕໍ່ສຸຂະພາບ *(Undesirable Health Effects Summary)* ໝາຍເຖິງ ຂໍ້ມູນຂອງອາການ, ຜົນກະທົບ ແລະ ຜົນຂ້າງຄຽງ ຈາກການນຳໃຊ້ ເຄື່ອງສຳອາງ ທີ່ເກີດຂຶ້ນກັບຜູ້ຊົມໃຊ້ຕົວຈິງ. ລວມທັງຜົນຂອງການດຳເນີນການແກ້ໄຂໃນກໍລະນີທີ່ມີຜົນກະທົບບໍ່ຮ້າຍແຮງ

**ABC COSMETICS CO., LTD**

Date: 10/08/2021

**Undesirable Health Effects Summary**

| | |
|---|---|
| Product Name | ABC Color Shampoo-Natural Black |
| Country where Sold: | Vietnam, China, Cambodia |
| Total number of undesirable health effects: | 10 |
| First Launch: | 2018 |

| Case Number | Date of Contact | Country |
|---|---|---|
| 6 | June 2019 | Vietnam |
| 3 | October 2020 | China |
| 1 | January 2021 | Cambodia |

Signature

Name

Position

4.3.10 ສະຫຼຸບຫຍໍ້ການປະເມີນຄວາມປອດໄພ *(Safety Assessment Summary)* ໝາຍເຖິງ ການຢັ້ງຢືນຄວາມປອດໄພຂອງຜະລິດຕະພັນເຄື່ອງສຳອາງ ຈາກເຈົ້າຂອງຜະລິດຕະພັນ ຫຼື ໂຮງງານຜະລິດ

ຕົວຢ່າງ

**ABC COSMETICS CO., LTD**

Date: 10/08/2021

## Safety Assessment

Category: Color Shampoo
Product Name: ABC Color Shampoo-Natural Black
Manufacturing Plant: ABC COSMETICS CO., LTD

This product is formulated using the ingredients suitable for use in cosmetics Directive and the formula meets the Annexes of the ASEAN Cosmetic Directive.

This product is a cosmetic according to Article 2.1 of ASEAN Cosmetic Directive. It is assessed not to cause damage to account, the product presentation, its labeling, instructions for its use and disposal as well as any other indication or information provided by the manufacturer. This assessment considers the general toxicological profile of the ingredients, their chemical structure and their level of exposure.

This assessment of human safety is carried out in accordance with ASEAN Guideline for safety evaluation of cosmetic products.

signature

Name

Position

5. ຄ່າທຳນຽມ ແລະ ຄ່າບໍລິການ
   ຄ່າທຳນຽມ: 01 ຜະລິດຕະພັນ / 200,000 ກີບ / 2 ປີ.
   ຄ່າບໍລິການ: 01 ຜະລິດຕະພັນ/ 50,000 ກີບ
6. ຜະລິດຕະພັນທີ່ນຳມາຈົດແຈ້ງ 1 ຕົວຢ່າງ
7. ໄລຍະເວລາຂອງການພິຈາລະນາເອກະສານ
   ການຈົດແຈ້ງໃໝ່: ກຳນົດ 14 ວັນ ລັດຖະການ;
   ການຕໍ່ຈົດແຈ້ງ: ກຳນົດ 10 ວັນ ລັດຖະການ.